**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---===0000===---

**ກະຊວງການ ເງິນ** ເລກທີ:00070/ກພສ.

**ກົມພາສີ** ນະຄອນຫຼວງວຽງຈັນ, ວັນທີ:13/10/2010

**ແຈ້ງການ**

**ເຖິງ: ບັນດາພະແນກອອັ້ມຂ້າງກົມພາສີ, ພາສີປະຈຳເຂດ ແລະ ດ່ານພາສີ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງຂອງສາກົນ, ບັນດາຫົວໜ່ວຍທຸລະກິດ ຂາອອກ-ຂາເຂົ້າ ໃນຂອບເຂດທົ່ວປະເທດ**

**ເລື່ອງ: ປະກາດການຈັດຕັ້ງປະຕິບັດ ສັນຍາການຄ້າດ້ານຜະລິດຕະພັນອາຊຽນໃນກອບ ຟອມດີ (ATIGA Form D).**

- ອີງຕາມ ສານປະກາດການໃຫ້ສັດຕະຍາບັນຂອງປະທານປະເທດ ສະບັບລົງວັນທີ 25/11/ 2009.

- ອີງຕາມ ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 72/ຄປຈ, ລົງວັນທີ 19/10/2010.

- ອີງຕາມແຈ້ງການຂອງລັດຖະມົນຕີວ່າການກະຊວງການເງິນ, ສະບັບເລກທີ 2308/ກງ, ລົງວັນທີ 22/09/2010.

ເພື່ອໃຫ້ການຈັດຕັ້ງປະຕິບັດ ການໃຫ້ສິດທິພິເສດການເສຍພາສີຂາເຂົ້າໃນອັດຕາພາສີ ຫຼຸດຜ່ອນ ໃນກອບເຂດການຄ້າເສລີອາຊຽນ ຫຼື ອັຟຕາ ເປັນໄປຢ່າງສອດຄ່ອງ ແລະ

ທັນຕາມກຳນົດເວລາຂອງສັນຍາການຄ້າດ້ານຜະລິດຕະພັນອາຊຽນ (ASEAN Trade in Goods Agreement ຫຼື ATIGA) ທີ່ລັດຖະບານໄດ້ລົງນາມກັບບັນ ດາປະເທດອາຊຽນອື່ນໆ ໃນວັນທີ 26 ກຸມພາ 2009, ທີ່ ຊະອຳ, ປະເທດໄທ.

ນັບແຕ່ໄລຍະນີ້ເຖິງວັນທີ 16 ພະຈິກ 2010 ການໃຫ້ສິດທິພິເສດໃນການເສຍພາສີຂາເຂົ້າ ໃນອັດຕາພາສີ ຫຼຸດຜ່ອນ ໃນກອບເຂດການຄ້າເສລີອາຊຽນ ຫຼື ອັຟຕາ ແມ່ນສາມາດປະຕິບັດໄດ້ 02 ກອບຄື: CEPT Form D ແລະ ATIGA Form D, ແຕ່ຫຼັງຈາກວັນທີ 16 ພະຈິກ 2010 CEPT Form D ແມ່ນຕ້ອງຖືກລຶບລ້າງຢ່າງສິ້ນເຊີງ, ໝາຍຄວາມວ່າ ນັບແຕ່ວັນທີ 17 ພະຈິກ 2010 ເປັນຕົ້ນໄປ ການໃຫ້ສິດທິພິເສດໃນການເສຍພາສີຂາເຂົ້າ ໃນອັດຕາພາສີ ຫຼຸດຜ່ອນ ໃນກອບເຂດການຄ້າເສລີອາຊຽນ ຫຼືອັຟຕາ ແມ່ນຈະສາມາດປະຕິບັດໄດ້ໃນກອບ ATIGA Form D ພຽງຢ່າງດຽວເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**<u>ຫົວໜ້າກົມພາສີ</u>**

**ສັນຕິພາບ ພົມວິຫານ**